# ຕະຫຼາດຫຼັກຊັບລາວຈັດສຳມະນາ "ການວິເຄາະ ແລະ ການລົງທຶນ"




ໃນຕອນເຊົ້າຂອງວັນທີ 16 ກຸມພາ, ທີ່ອາຄານຕະຫຼາດຫຼັກຊັບລາວ ນະຄອນຫຼວງວຽງຈັນ ໄດ້ຈັດສຳມະນາພາຍໃຕ້ຫົວຂໍ້ "ການວິເຄາະ ແລະ ການລົງທຶນ" ໂດຍການຈັດຂຶ້ນຂອງຕະຫຼາດຫຼັກຊັບລາວກັບບໍລິສັດບໍລິຫານຫຼັກຊັບ APM ແລະ ບໍລິສັດອອນໄລເອແຊັດ (Online Asset) ແຫ່ງປະເທດໄທ ໂດຍການເຂົ້າຮ່ວມຂອງທ່ານ ນາງ ວັດທະນາ ດາລາລອຍ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບລາວ, ພ້ອມນີ້ກໍມີທ່ານ ເດດພູວັງ ມູລຣັຕນ໌ ປະທານ, ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ ແລະ ບັນດາຄະນະນຳບໍລິສັດຂອງໄທ ແລະ ນັກສຳມະນາກອນເຂົ້າຮ່ວມຢ່າງຫຼວງຫຼາຍ.

ຈຸດປະສົງຂອງການສຳມະນາໃນຄັ້ງນີ້ ກໍເພື່ອຍົກລະດັບຂີດຄວາມສາມາດຂອງການວິເຄາະການລົງທຶນຂອງນັກລົງທຶນລາວ ແລະ ຄວາມຮູ້ຂອງການກະກຽມຄວາມພ້ອມຂອງຕະຫຼາດເງິນ ແລະ ຕະຫຼາດທຶນ, ການເປີດເສລີການຄ້າປະຊາຄົມເສດຖະກິດອາຊຽນ ເຊິ່ງສະເໜີໂດຍ ພິນເລີດ ເດຊະລັດຕະນະໂນພາດ ກຳມະການຜູ້ຈັດການບໍລິສັດອອນໄລເອແຊັດ ແລະ ທ່ານ ສົມພົບ ສັກພັນພະນົມ ປະທານຜູ້ບໍລິຫານບໍລິສັດບໍລິຫານຫຼັກຊັບ APM.

ການສຳມະນາຄັ້ງນີ້ໄດ້ມີນັກສຳມະນາກອນທີ່ເປັນນັກທຸລະກິດ-ນັກລົງທຶນທັງໜຸ່ມນ້ອຍ ແລະ ອາວຸໂສມາກໜ້າຫຼາຍຕາ ເຊິ່ງໃນນີ້ກໍມີທັງນັກທຸລະກິດຄົນລາວທີ່ຢູ່ຕ່າງປະເທດ ແລະ ການສຳມະນາຄັ້ງນີ້ ໄດ້ມີປະໂຫຍດອັນໃຫຍ່ຫຼວງແກ່ທຸລະກິດທັງພາກລັດ-ພາກເອກະຊົນ ແລະ ພາກປະຊາຊົນ ເຊິ່ງກ່ອນການລົງທຶນທຸກຄົນຕ້ອງສຶກສາ ແລະ ວິເຄາະໃຫ້ລະອຽດແລ້ວຈຶ່ງຕັດສິນໃຈລົງທຶນ ແລະ ມັນຈະນຳມາເຖິງຜົນປະໂຫຍດ ແລະ ກໍຈະຫຼີກລຽງຕໍ່ຄວາມສ່ຽງທີ່ອາດຈະເກີດຂຶ້ນ.